ກະຊວງສຶກສາແລະກໍ່ສ້າງ

**ມະຫາວິທະຍາໄລຢຸຍເຕິນ**

**ສາທາລະນະລະລັດສັງຄົມນິຍົມຫວຽດນາມ**

**ເອກະລາດ - ອິດສະຫຼະພາບ - ຄວາມຜາສຸກ**

## ຂໍ້ຕົກລົງ

## ຂອງຜູ້ອຳນວຍການໂຮງຮຽນມະຫາວິທະຍາໄລຢຸຍເຕິນ

## ກ່ຽວກັບການປະກາດໃຊ້ທຶນການສຶກສາໃນໂຄງການພອນສະຫວັນ

ອີງຕາມກົດໝາຍການສຶກສາມະຫາວິທະຍາໄລ ສະບັບເລກທີ 08/2012/QH13, ລົງວັນທີ18/06/2012 ແລະ ກົດໝາຍວ່າດ້ວຍການປັບປຸງ ແລະ ເພີ່ມເຕີມບາງມາດຕາຂອງກົດໝາຍວ່າດ້ວຍການສຶກສາມະຫາວິທະຍາໄລ ສະບັບເລກທີ 34/2018/QH14 ລົງວັນທີ 19/11/2018 ຂອງສະພາແຫ່ງຊາດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ;

ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີກ່ຽວກັບການສ້າງຕັ້ງມະຫາວິທະຍາໄລເອກະຊົນຢຸຍເຕິນ ເລກທີ 666/TTg ລົງວັນທີ 11/11/1994; ແລະ ຂໍ້ຕົກລົງຂອງນາຍົກລັດຖະມົນຕີກ່ຽວກັບການປ່ຽນແປງຮູບແບບຂອງມະຫາວິທະຍາໄລ ເລກທີ 1704/QĐ-TTg ລົງວັນທີ 02/10/2015.

ອີງຕາມຂໍ້ຕົກລົງສະບັບເລກທີ 05/QĐ-TĐDT ລົງວັນທີ 16/3/2020 ຂອງປະທານສະພາບໍລິຫານກຸ່ມບໍລິສັດຫຸ້ນສ່ວນຢຸຍເຕິນ ວ່າດ້ວຍການຮັບຮອງຜູ້ອຳນວຍການໂຮງຮຽນມະຫາວິທະຍາໄລ ຢຸຍເຕິນ ໄລຍະ 2020-2025;

ອີງຕາມແຜນນະໂຍບາຍຂອງຄະນະອຳນວຍການໂຮງຮຽນແລະການສະເໜີຂອງສູນຮັບສະໝັກນັກສຶກສາ.

## ຕົກລົງ

**ມາດຕາ 1.** ປະກາດໃຊ້ລະດັບທຶນການສຶກສາໃຫ້ນັກສຶກສາທີ່ຖືກຮັບເລືອກເຂົ້າໃນບັນດາສາຂາຮຽນຕ່າງໆ ຂອງໂຄງການພອນສະຫວັນ, ລາຍລະອຽດດັ່ງລຸ່ມນີ້:

**1. ສຳລັບນັກສຶກສາຕ່າງປະເທດ**

- ທຶນການສຶກສາເຕັມ ມີ45ທຶນ ( ແມ່ນທຶນ100%ຄ່າຮຽນໃນຕະຫລອດໄລຍະສຶກຮຽນ )

12

- ທຶນການສຶກສາສ່ວນໜຶ່ງ ມີ90ທຶນ ( ແມ່ນທຶນ50%ທາງໂຮງຮຽນຮັບຜິດຊອບຄ່າຮຽນເຄິ່ງໜຶ່ງໃນຕະຫລອດໄລຍະສຶກຮຽນ )
- ໃນປີກຽມພາສາທາງໂຮງຮຽນແມ່ນຮັບຜິດຊອບຄ່າຮຽນພາສາອັງກິດແລະຄ່າຮຽນພາສາຫວຽດໃຫ້ນັກສຶກສາ.

❖ **ເງື່ອນໄຂໃນການຄັດເລືອກ.**

ນັກຮຽນທີ່ຈະໄດ້ຮັບທຶນການສຶກສາຕ້ອງຈົບມັດທະຍົມຕອນປາຍ ແລະ ມີສັນຊາດຕ່າງປະເທດ.

**2. ສຳລັບນັກສຶກສາຫວຽດນາມ**

- ທຶນການສຶກສາເຕັມ ມີ45ທຶນ( ທຶນ100%ລວມຄ່າຮຽນໃນຕະຫລອດໄລຍະສຶກຮຽນ )
- ທຶນການສຶກສາສ່ວນໜຶ່ງ ມີ45ທຶນ (ແມ່ນທຶນ50%ທາງໂຮງຮຽນຮັບຜິດຊອບຄ່າຮຽນເຄິ່ງໜຶ່ງໃນຕະຫລອດໄລຍະສຶກຮຽນ)

❖ **ເງື່ອນໄຂໃນການຄັດເລືອກ**

**2.1.** ຜູ້ທີ່ໄດ້ຮັບ**ລາງວັນທີ1, ທີ2, ທີ3 ແລະລາງວັນຊົມເຊີຍ**ໃນການເສັງເລືອກນັກຮຽນເກັ່ງລະດັບຊາດ; ຜູ້ທີ່ໄດ້ຮັບ**ລາງວັນທີ1, ທີ2, ທີ3 ແລະລາງວັນຊົມເຊີຍ**ໃນການແຂ່ງຂັນວິທະຍາສາດແລະເຕັກນິກໂດຍກະຊວງສຶກສາແລະກໍ່ສ້າງຈັດຕັ້ງ, ໄດ້ຈົບມັດທະຍົມຕອນປາຍຈະໄດ້ຮັບເຂົ້າຮຽນໃນມະຫາວິທະຍາໄລໂດຍກົງຕາມຂະແໜງການຮຽນທີ່ເໝາະສົມກັບວິຊາທີ່ນັກສຶກສາໄດ້ຮັບລາງວັນແລະຕ້ອງມີຄະແນນເສັງ IELTS ແຕ່ 5.5ຂຶ້ນໄປຫລືຄະແຄນພາສາອັງກິດ >= 6 (ຄະແນນເສັງຈົບມັດທະຍົມຕອນປາຍ ).

| ເງື່ອນໄຂໃນການຄັດເລືອກ | ລະດັບທຶນການສຶກສາ |
|---|---|
| ໄດ້ຮັບລາງວັນທີ1, ທີ2, ທີ3, ຄະແນນພາສາອັງກິດ >= 6 ຫລື ຄະແນນເສັງ IELTS ແຕ່ 5.5ຂຶ້ນໄປ | ທຶນການສຶກສາເຕັມ (ຄ່າຮຽນແມ່ນທຶນ100%) |
| ໄດ້ຮັບລາງວັນຊົມເຊີຍ, ຄະແນນພາສາອັງກິດ >= 6 ຫລືຄະແນນເສັງ IELTS ແຕ່ 5.5ຂຶ້ນໄປ | ທຶນການສຶກສາສ່ວນໜຶ່ງ (ຄ່າຮຽນແມ່ນທຶນ50%) |

**2.2.** ສຳລັບນັກຮຽນທີ່ມີຜົນການເສັງ 3ວິຊາທີ່ກົງກັບກຸ່ມວິຊາຄັດເລືອກໃນການເສັງຈົບມັດທະຍົມຕອນປາຍ ປີ2022ຈະໄດ້ຄັດເລືອກຕາມນີ້.

| ເງື່ອນໄຂໃນການຄັດເລືອກ | ລະດັບທຶນການສຶກສາ |
|---|---|
| ຄະແນນຄັດເລືອກ >=23ຄະແນນ; ຄະແນນ ພາສາອັງກິດ >= 6 ຫລືຄະແນນເສັງ IELTS ແຕ່ 5.5ຂຶ້ນໄປ. | ທຶນການສຶກສາເຕັມ ( ຄ່າຮຽນແມ່ນທຶນ100% ) |
| ຄະແນນຄັດເລືອກ >=21ຄະແນນ; ຄະແນນ ພາສາອັງກິດ >= 6 ຫລືຄະແນນເສັງ IELTS ແຕ່ 5.5ຂຶ້ນໄປ. | ທຶນການສຶກສາສ່ວນໜຶ່ງ(ຄ່າຮຽນແມ່ນທຶນ50%) |

**ມາດຕາ 2. ເງື່ອນໄຂແລະຂໍ້ກຳນົດ**

- ລາຍຊື່ຈະໄດ້ພິຈາລະນາ ແລະ ຄັດເລືອກຕາມລຳດັບທີ່ລົງເອກະສານລົງທະບຽນສະໝັກຮຽນໃນແຕ່ລະງວດ, ແລະ ຮັບປະກັນຕົວເລກທຶນການສຶກສາຕາມທີ່ໄດ້ກຳນົດໄວ້.
- ທຶນການສຶກສາແມ່ນອອກໃຫ້ໃນເວລາເຂົ້າສຶກຮຽນຢ່າງເປັນທາງການ, ແຕ່ຖ້ານັກຮຽນເຂົ້າໄປຮຽນກາຍເວລາທີ່ກຳນົດແມ່ນຈະບໍ່ໄດ້ຮັບທຶນການສຶກສາ.
- ຫ້າມໂອນກຳມະສິດທຶນການສຶກສາໃຫ້ຄົນອື່ນ.
- ເພື່ອສືບຕໍ່ການໄດ້ຮັບທຶນການສຶກສາໃນແຕ່ລະປີ, ນັກສຶກສາຫວຽດນາມທີ່ຈະໄດ້ຮັບທຶນການສຶກສາຕ້ອງມີຄະແນນສະເລ່ຍຂອງປີຮຽນ(GPA)ໃນແຕ່ລະປີ.

| ຂະແໜງຮຽນ | GPAທຶນເຕັມ | GPAທຶນສ່ວນໜຶ່ງ |
|---|---|---|
| ເຕັກນິກ | 3.2 / 4.0 | 3.0 / 4.0 |
| ສັງຄົມ / ເສດຖະກິດ | 3.4 / 4.0 | 3.2 / 4.0 |

**+ ເງື່ອນໄຂບັງຄັບແລະການຊົດເຊີຍ**

ນັກສຶກສາຫວຽດນາມທີ່ໄດ້ຮັບທຶນການສຶກສາຖ້າອອກໂຮງຮຽນ, ເຊົາຮຽນ ຫລື ຍ້າຍໄປຮຽນຢູ່ໂຮງຮຽນອື່ນໃນປີ1ຫຼືຕົ້ນປີ2ຕ້ອງຊົດເຊີຍຄ່າຮຽນປີທຳອິດໃຫ້ທາງໂຮງຮຽນ.

**+ ໂອກາດໃນການຊອກຫາວຽກງານສຳລັບນັກສຶກສາຫວຽດນາມ**

ທາງໂຮງຮຽນມະຫາວິທະຍາໄລຢຸຍເຕີນຈະບຸລິມະສິດເປັນພິເສດໃນການຈັດຫາວຽກເຮັດງານທຳໃຫ້ນັກສຶກສາພາຍຫຼັງຮຽນຈົບ ຈະສະເໜີກັບບັນດາຄູ່ຮ່ວມມືຂອງໂຮງຮຽນ ຫຼື ຈະຮັບເອົາເປັນພະນັກງານຄົ້ນຄ້ວາ, ເປັນອາຈານສອນເຮັດວຽກໃນໂຮງຮຽນມະຫາວິທະຍາໄລຢຸຍເຕີນ.

**ມາດຕາ 3.** ຫ້ອງການການສຶກສາ ແລະ ຫຼັງປະລິນຍາຕີ, ສູນຮັບສະໝັກນັກສຶກສາ, ຫ້ອງການຈັດຕັ້ງ, ຫ້ອງການແຜນການ - ການເງິນ, ຫ້ອງການໂຮງຮຽນ ແລະ ບັນດາຫົວໜ່ວຍໃນໂຮງຮຽນຮັບຜິດຊອບ ແລະປະຕິບັດຕາມຂໍ້ຕົກລົງນີ້.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການໂຮງຮຽນ**

(ເຊັນແລ້ວ)

ປອ. ເລ ງວຽນ ບ້າວ

15